ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ

ຫ້ອງການກະຊວງ

ເລກທີ: 2924 /ຫກ

ນະຄອນຫຼວງວຽງຈັນ, ວັນທີ: 22/09/2025

ໂຄງການເສີມສ້າງທັກສະທີ່ເປັນບູລິມະສິດ ສໍາລັບການເຕີບໂຕຂອງ ສປປ ລາວ

ສັນຍາເລກທີ : RFQ C2.1-G-14

## ໜັງສືເຊີນ ເຂົ້າຮ່ວມການປະມູນສົມທຽບລາຄາ

1. ກົມການຈັດຫາງານ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ໂຄງການ ເສີມສ້າງທັກສະທີ່ເປັນບູລິມະສິດ ສໍາລັບການເຕີບໂຕຂອງ ສປປ ລາວ, ໄດ້ຮັບອະນຸມັດງົບປະມານ ປະຈໍາສົກປີ 2025 ເພື່ອດໍາເນີນການປະມູນຈັດຊື້-ຈັດຈ້າງ **ສ້າງ ແລະ ຜະລິດ ສື່ໂຄສະນາ ຄິບສຽງ (Spot Audio)** ສໍາລັບໂຄສະນາວຽກງານບໍລິການຈັດຫາງານພາຍໃນ ດ້ວຍການປະມູນແບບສົມທຽບລາຄາ.
2. ກົມການຈັດຫາງານ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ໂຄງການ ເສີມສ້າງທັກສະທີ່ເປັນບູລິມະສິດ ສໍາລັບການເຕີບໂຕຂອງ ສປປ ລາວ ຂໍເຊີນບໍລິສັດຂອງທ່ານເຂົ້າຍື່ນຊອງປະມູນແບບສົມທຽບລາຄາ ສໍາລັບການຈັດຊື້-ຈັດຈ້າງ **ສ້າງ ແລະ ຜະລິດ ສື່ໂຄສະນາ ຄິບສຽງ (Spot Audio) ຈໍານວນ 02 ຄິບສຽງ** ໄລຍະເວລາໃນການສົ່ງມອບ ຫລື ການບໍລິການແມ່ນ **[30 ວັນ]**.
3. ການປະມູນນີ້ ຈະດໍາເນີນຕາມຂັ້ນຕອນ ການປະມູນສົມທຽບລາຄາ ທີ່ໄດ້ກໍານົດໄວ້ ຢູ່ໃນກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄໍາແນະນໍາກ່ຽວກັບການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ຂອງກະຊວງການເງິນ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.
4. ຊອງປະມູນຕ້ອງສົ່ງກ່ອນເວລາ **11:00 ໂມງ, ວັນທີ 09 ຕຸລາ 2025, ທີ່ ຫ້ອງປະຊຸມກະຊວງແຮງງານ ແລະ ສະຫວັດດີການສັງຄົມ (ຊັ້ນ 3) ບ້ານ ໂພນສະຫວ່າງ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ. ໂທລະສັບ 020 91114568, 020 29939999. Email: domesticemploymentdivision@gmail.com cc: psgproject.proc@gmail.com; phonemalykhattiya@gmail.com** ແລະ ຊອງປະມູນສົມທຽບລາຄາທຸກໆຊອງ ຈະໄດ້ເປີດໃນເວລາ **11:10 ໂມງ ວັນທີ 09 ຕຸລາ 2025** ໂດຍຊ້ອງໜ້າ ຄະນະກໍາມະການປະມູນ ແລະ ຕົວແທນຂອງຜູ້ປະມູນ ທີ່ສົນໃຈຕ້ອງການເຂົ້າຮ່ວມ.

ຫົວໜ້າຫ້ອງການ

(ຫົວໜ້າໂຄງການ)

ບຸນຍອດ ຈັນທະວອນ